ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ ຫ້ອງການ ທຫລ
ໂທ/ແຟກ (856-21) 213109, 213110

# ພິທີປະກາດສ້າງຕັ້ງຫ້ອງການຕົວແທນທະນາຄານແຫ່ງ ສປປ ລາວ ປະຈຳເຂດເສດຖະກິດພິເສດບໍ່ເຕັນແດນງາມ




ໃນຂອງວັນທີ 01 ກັນຍາ 2023 ນີ້, ທີ່ພາກເໜືອ ແຂວງຫຼວງນ້ຳທາ ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ຈັດພິທີປະກາດສ້າງຕັ້ງຫ້ອງການຕົວແທນທະນາຄານແຫ່ງ ສປປ ລາວ ປະຈຳເຂດເສດຖະກິດພິເສດ ບໍ່ເຕັນແດນງາມ ຂຶ້ນ ໂດຍການໃຫ້ກຽດເປັນປະທານຂອງທ່ານ ນ. ຂັນແກ້ວ ຫຼ້າມະນີເງົາ ຮອງຜູ້ວ່າການ ທະນາຄານແຫ່ງ ສປປ ລາວ, ໃຫ້ກຽດເຂົ້າຮ່ວມໂດຍທ່ານ ສີວິໄລ ປັນແກ້ວ ກຳມະການປະຈຳພັກ, ຮອງເຈົ້າແຂວງ ແຂວງຫຼວງນ້ຳທາ ພ້ອມດ້ວຍຄະນະກົມ ທຫລ, ຄະນະ ສາຂາ ທຫລ ປະຈຳພາກ ແລະ ອົງການປົກຄອງແຂວງທີ່ກ່ຽວຂ້ອງເຂົ້າຮ່ວມຢ່າງພ້ອມພຽງ.



ຈຸດປະສົງຂອງການສ້າງຕັ້ງຫ້ອງການຕົວແທນ ທຫລ ຂຶ້ນນີ້ ກໍເພື່ອຈັດຕັ້ງຜັນຂະຫຍາຍວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກ ດ້ານເສດຖະກິດ-ການເງິນ ໂດຍສະເພາະວຽກຈຸດສຸມທີ 4 ການສ້າງສະຖຽນລະພາບດ້ານເງິນຕາຢູ່ທະນາຄານແຫ່ງຊາດ ໄດ້ແຕ່ງຕັ້ງຄະນະຮັບຜິດຊອບຄົ້ນຄວ້າຄວ້າປັບປຸງກົນໄກການຄຸ້ມຄອງວຽກງານການເງິນ-ເງິນຕາ ເຂດເສດຖະກິດພິເສດ ແລະ ໄດ້ເຄື່ອນໄຫວເກັບກຳຂໍ້ມູນຢູ່ເຂດດັ່ງກ່າວ ເຫັນວ່າມີຄວາມຈຳເປັນໃນການສ້າງຕັ້ງຫ້ອງການຕົວແທນຢູ່ໃນເຂດເສດຖະກິດພິເສດ ບໍ່ເຕ່ນແດນງາມ. ໂດຍອີງໃສ່ການເຫັນດີຂອງລັດຖະບານ ກໍໄດ້ດຳເນີນການຄົ້ນຄວ້າສ້າງຕັ້ງຫ້ອງການຕົວແທນ ທຫລ ປະຈຳພາກເໜືອເຂດເສດຖະກິດພິເສດດັ່ງກ່າວ ຊຶ່ງຫ້ອງການຕົວແທນນີ້, ມີພາລະບົດບາດເປັນເສນາທິການໃນການຈັດຕັ້ງປະຕິບັດວຽກງານການບໍລິການ-ອຳນວຍຄວາມສະດວກ, ການຕິດຕາມ, ກວດກາ ແລະ ຊຸກຍູ້ສົ່ງເສີມການຈັດຕັ້ງປະຕິບັດວຽກງານການຄຸ້ມຄອງດ້ານເງິນຕາ, ການຄຸ້ມຄອງສະຖາບັນການເງິນ ແລະ ລະບົບການຊຳລະ ພ້ອມທັງເປັນໃຈກາງໃນການປະສານສົມທົບກັບອົງການປົກຄອງແຂວງ, ຄະນະຄຸ້ມຄອງເຂດເສດຖະກິດພິເສດ, ຜູ້ພັດທະນາເຂດ ແລະ ຜູ້ລົງທຶນຢູ່ໃນເຂດເສດຖະກິດພິເສດທີ່ຕົນຮັບຜິດຊອບ ເພື່ອເປັນການສົ່ງເສີມການລົງທຶນໃນເຂດເສດຖະກິດພິເສດ ໃຫ້ມີຄວາມສະດວກ, ວອງໄວ, ຖືກຕ້ອງ ແລະ ໂປ່ງໃສ່. ເຊິ່ງກ່ອນໜ້ານີ້ ທຫລ ກໍ່ໄດ້ສ້າງຕັ້ງຫ້ອງການຕົວແທນ ທຫລ ປະຈຳພາກເໜືອເຂດເສດຖະກິດພິເສດ 3 ຫຼຽມຄຳ ທີ່ແຂວງ ບໍ່ແກ້ວ ໃນວັນທີ 31 ສິງຫາ 2023 ຢ່າງເປັນທາງການ.




**ຂ່າວ-ພາບ: ສົມພິດ ທຳມະວົງ**

*ຢູ່ເມືອງລາວໃຊ້ເງິນກີບລາວ*